ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ເລກທີ........../ອປສ.

ອົງການປະກັນສັງຄົມ

ນະຄອນຫຼວງວຽງຈັນ, ວັນທີ ຕຸລາ 2007

# ແຈ້ງການ

ເຖິງ: ບັນດາຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານທີ່ເປັນສະມາຊິກກອງທຶນປະກັນສັງຄົມ

ເລື່ອງ: ການປ່ຽນໂຮງໝໍເພື່ອໃຊ້ບໍລິການປິ່ນປົວຂອງຜູ້ປະກັນຕົນ ປະຈຳປີ 2008.

- ອີງຕາມມາດຕາ 32 ຂອງດຳລັດນາຍົກລັດຖະມົນຕີເລກທີ207/ນຍ, ລົງວັນທີ 23 ທັນວາ 1999 ວ່າດ້ວຍລະບອບປະກັນສັງຄົມສຳລັບຜູ້ອອກແຮງງານໃນວິສາຫະກິດ.

ເພື່ອຮັບປະກັນຄວາມສະດວກຂອງຜູ້ປະກັນຕົນແລະຄອບຄົວໃນການໄປໃຊ້ບໍລິການປິ່ນປົວຢູ່ຕາມໂຮງໝໍທີ່ເປັນຄູ່ສັນຍາກັບ ອປສ ເຊັ່ນ: ໂຮງໝໍ ມະໂຫສົດ, ເຊດຖາທິຣາດ, ມິດຕະພາບ(150ຕຽງ), ໂຮງໝໍແຂວງວຽງຈັນ, ແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ໂຮງໝໍ ເມືອງ ວັງວຽງ.

ຜູ້ອຳນວຍການ ອປສ ຂໍແຈ້ງເຖິງບັນດາວິສາຫະກິດ ແລະ ຜູ້ອອກແຮງງານທີ່ເປັນສະມາຊິກ ອປສ ຮັບຊາບ ແລະ ປະຕິບັດດັ່ງນີ້:

ຖ້າຜູ້ປະກັນຕົນ ຫາກມີຈຸດປະສົງຢາກປ່ຽນໂຮງໝໍທີ່ໄດ້ເລືອກໃນໄລຍະຜ່ານມານັ້ນ, ກະລຸນາປະກອບແບບຟອມແຈ້ງປ່ຽນແປງຂໍ້ມູນຕາມທີ່ ອປສ ໄດ້ແຈກຢາຍໃຫ້ວິສາຫະກິດຂອງທ່ານ (ແບບຟອມ 105) ຫຼື ເຮັດເປັນບັນຊີລາຍຊື່ຜູ້ປະກັນຕົນຫຼາຍຄົນພ້ອມກັນ,ໂດຍລະບຸຊື່ໂຮງໝໍທີ່ເຄີຍເລືອກ ແລະ ໂຮງໝໍໃໝ່ທີ່ເລືອກໃຊ້ບໍລິການປິ່ນປົວຂອງແຕ່ລະຄົນ ແລ້ວນຳສົ່ງໃຫ້ ອປສ ພາຍໃນໄລຍະວັນທີ 1 ຫາ 30 ພະຈິກ 2007ນີ້. ຈາກນັ້ນ, ທ່ານໃດທີ່ໄດ້ແຈ້ງປ່ຽນໂຮງໝໍ ກໍຈະມີສິດໃຊ້ບໍລິການຢູ່ໂຮງໝໍທີ່ທ່ານເລືອກໃໝ່ນັ້ນໄດ້ນັບແຕ່ວັນ ທີ 1 ມັງກອນ 2008 ເປັນຕົ້ນໄປ. ແຕ່ສຳລັບ ກໍລະນີເຈັບເປັນທີ່ເກີດຂື້ນກ່ອນວັນທີ 1 ມັງກອນ 2008 ນັ້ນໃຫ້ບັນດາທ່ານ ຫຼື ຄອບຄົວໄປໃຊ້ການບໍລິການປິ່ນປົວຢູ່ໂຮງໝໍແຫ່ງເດີມເສຍກ່ອນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຮັບຊາບ ແລະ ໃຫ້ຄວາມຮ່ວມມືນຳພວກເຮົາດ້ວຍ.

**ຜູ້ອຳນວຍການ ອປສ**